ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

## ສຳມະນາໃນຫົວຂໍ້ "ການບໍລິຫານຄວາມສ່ຽງສະພາບຄ່ອງ ແລະ ການກະກຽມແຫຼ່ງທຶນ ເພື່ອຮອງຮັບຄວາມສ່ຽງສະພາບຄ່ອງ ແລະ ການທົດສອບຄວາມເຄັ່ງຕຶງດ້ານສະພາບຄ່ອງ"




ໃນຕອນເຊົ້າຂອງວັນທີ 29 ມິຖຸນາ 2022 ກົມຄຸ້ມຄອງທະນາຄານທຸລະກິດ, ທະນາຄານແຫ່ງ ສປປ ລາວ ໄດ້ມີການຈັດສຳມະນາ ຮ່ວມກັບ ທະນາຄານ ກະສິກອນໄທ ຈຳກັດ ໃນຫົວຂໍ້ "ການບໍລິຫານຄວາມສ່ຽງດ້ານສະພາບຄ່ອງ (Liquidity Risk)" ແລະ "ການກະກຽມແຫຼ່ງທຶນເພື່ອຮອງຮັບຄວາມສ່ຽງສະພາບຄ່ອງ ແລະ ການທົດສອບຄວາມເຄັ່ງຕຶງດ້ານສະພາບຄ່ອງ (Capital Planning and Stress Testing on Liquidity) ທີ່ຫ້ອງປະຊຸມຊັ້ນ 7 ທຫລ. ໂດຍການເປັນປະທານ ຂອງທ່ານ ປອ. ສິມປະດິດ ວໍລະຈິດ ຮອງຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ, ຊຶ່ງບັນຍາຍໂດຍທ່ານ ນາງ Lugkana Chivamavin ຜູ້ອຳນວຍການສາຍງານບໍລິຫານຄວາມສ່ຽງອົງກອນ ແລະ ທ່ານ Nont Niwestongrerk ຮອງຜູ້ອຳນວຍການສາຍງານບໍລິຫານຄວາມສ່ຽງອົງກອນ ຈາກ ທະນາຄານ ກະສິກອນໄທ ຈຳກັດ ສຳນັກງານໃຫຍ່ (ປະເທດໄທ), ມີຜູ້ເຂົ້າຮ່ວມ ຈາກບັນດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ ແລະ ທະນາຄານທຸລະກິດ ຈຳນວນ 34 ແຫ່ງ ລວມທັງໝົດຈຳນວນ 100 ທ່ານ.

ການສຳມະນາໃນຄັ້ງນີ້ ໄດ້ອະທິບາຍກ່ຽວກັບຄວາມໝາຍຄວາມສຳຄັນຂອງຄວາມສ່ຽງດ້ານສະພາບຄ່ອງ, ຄຸນລັກສະນະຂອງຄວາມສ່ຽງສະພາບຄ່ອງທີ່ເກີດຂຶ້ນມາຈາກຫຼາຍປັດໄຈທັງພາຍໃນ ແລະ ພາຍນອກ, ພ້ອມທັງກ່າວເຖິງປະຫວັດຫຍໍ້ຂອງການກຳເນີດຄວາມສ່ຽງດ້ານສະພາບຄ່ອງ ທີ່ມີຕົ້ນກຳເນີດມາຈາກການວິກິດທາງດ້ານເສດຖະກິດຂອງສະຫະລັດ ອາເມລິກາ ໃນປີ 2008 ເຮັດໃຫ້ຄະນະກຳມະການຂອງບາເຊວໃນການຄຸ້ມຄອງທະນາຄານ (BCBS) ໄດ້ເຫັນບັນຫາດັ່ງກ່າວ ແລະ ພັດທະນາຫຼັກການໃຫ້ທະນາຄານທຸລະກິດ ຕ້ອງມີການສຳຮອງສະພາບຄ່ອງໃຫ້ພຽງພໍ ອີງຕາມໄລຍະ

ເວລາຂອງໜີ້ສິນໄລຍະສັ້ນ. ນອກຈາກນັ້ນ, ຍັງເວົ້າເຖິງຫຼັກການກ່ຽວກັບຄວາມສ່ຽງດ້ານສະພາບຄ່ອງ ແລະ ເນື້ອໃນບາງຈຸດທີ່ສຳຄັນ ເຊັ່ນ: ອັດຕາສ່ວນຄຸ້ມຄອງສະພາບຄ່ອງ (Liquidity Coverage Ratio ຫຼື LCR), ອັດຕາສ່ວນແຫຼ່ງທຶນທີ່ໝັ້ນຄົງສຸດທິ (Net Stable Funding Ratio), ເງື່ອນໄຂອື່ນໆທີ່ມີຜົນກະທົບຕໍ່ກັບ LCR, ການຈັດຕັ້ງປະຕິບັດ ແລະ ບັນຫາກ່ຽວກັບຫຼັກການຄວາມສ່ຽງດ້ານສະພາບຄ່ອງໃນປະເທດຕະຫຼາດເກີດໃໝ່ (Implementation and Issues in Emerging Market).





ການສຳມະນາໄດ້ດຳເນີນໄປດ້ວຍບັນຍາກາດອັນຟົດຟື້ນ ແລະ ດ້ວຍຄວາມຮັບຜິດຊອບສູງຂອງບັນດານັກວິທະຍາກອນ ທີ່ໄດ້ເອົາໃຈໃສ່ຖ່າຍທອດບົດຮຽນປະສົບການ ແລະ ການຕອບຄຳຖາມເຈາະຈີ້ມຂອງຜູ້ເຂົ້າຮ່ວມທີ່ໃຫ້ຄວາມສົນໃຈຈຳນວນຫຼາຍ. ຜ່ານການຈັດສຳມະນາຝຶກອົບຮົມ ສາມາດເຫັນໄດ້ວ່າ ວຽກງານດັ່ງກ່າວ ແມ່ນມີຄວາມສຳຄັນຫຼາຍຕໍ່ກັບສະຖາບັນການເງິນ ເຊິ່ງຈຳເປັນຕ້ອງມີມາດຕະການບໍລິຫານຄວາມສ່ຽງສະພາບຄ່ອງທີ່ເໝາະສົມ ເພື່ອຮອງຮັບກໍລະນີເກີດມີການຂາດສະພາບຄ່ອງ, ເນື່ອງຈາກຜົນກະທົບ ແລະ ຄວາມເສຍຫາຍຈາກຄວາມສ່ຽງດັ່ງກ່າວ ສາມາດກະຈາຍໄດ້ໃນທົ່ວລະບົບການເງິນ ແລະ ສົ່ງຜົນກະທົບຕໍ່ລະບົບເສດຖະກິດມະຫາພາກຂອງປະເທດ.

**ພາບ ແລະ ຂ່າວ ໂດຍ: ກົມຄຸ້ມຄອງທະນາຄານທຸລະກິດ**

ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ